**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ເລກທີ 2871/ສສກ

ນະຄອນຫຼວງວຽງຈັນ, ວັນທີ 23 ພຶດສະພາ 2025

# ຂໍ້ຕົກລົງ
# ວ່າດ້ວຍການໂຮມໂຮງຮຽນສາມັນ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ມະຕິກ່ຽວກັບນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາ ການຂາດແຄນຄູສອນ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ ສະບັບເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າ ຂອງກົມຈັດຕັ້ງ ແລະ ພະນັກງານ.

## ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການໂຮມໂຮງຮຽນສາມັນ ພາຍໃນຂະແໜງການສຶກສາທິການ ແລະ ກິລາ ເພື່ອເປັນບ່ອນອີງໃຫ້ແກ່ ການຄຸ້ມຄອງວຽກງານການສຶກສາແຕ່ລະຂັ້ນ ໃນການດຳເນີນການຮຽນ ການສອນ ໃຫ້ເປັນລະບົບ ມີຄວາມເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ແກ້ໄຂບັນຫາ ການຂາດຄູສອນ ແລະ ພັດທະນາການສຶກສາໃຫ້ມີຄຸນນະພາບດີຂຶ້ນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການໂຮມ ໂຮງຮຽນສາມັນ

ການໂຮມໂຮງຮຽນສາມັນ ແມ່ນ ການໂຮມເອົາໂຮງຮຽນ ມູນລະປະຖົມ, ປະຖົມສົມບູນ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ ທີ່ມີພື້ນທີ່ໃກ້ຄຽງກັນຢ່າງໜ້ອຍ ສອງໂຮງຮຽນຂຶ້ນໄປ ເປັນໂຮງຮຽນດຽວກັນ ໂດຍອີງຕາມສະພາບແວດລ້ອມເງື່ອນໄຂຕົວຈິງ ແລະ ຄວາມເໝາະສົມພາຍໃນ ກຸ່ມໂຮງຮຽນ, ເມືອງ, ນະຄອນ, ແຂວງ, ນະຄອນຫຼວງ.

**ມາດຕາ 3 ຫຼັກການກ່ຽວກັບການໂຮມ ໂຮງຮຽນສາມັນ**

ການໂຮມ ໂຮງຮຽນສາມັນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ມະຕິ, ກົດໝາຍ ແລະ ແຜນພັດທະນາການສຶກສາ ແລະ ກິລາ;
2. ຮັບປະກັນ ຄວາມຖືກຕ້ອງ ແລະ ສອດຄ່ອງ ຕາມມາດຕະຖານ ແລະ ເງື່ອນໄຂ ຕົວຈິງ;
3. ຮັບປະກັນການຈັດຕັ້ງປະຕິບັດຕາມ ຂັ້ນຕອນ, ວິທີການ ແລະ ລະບຽບການ ທີ່ກຳນົດໄວ້;
4. ຮັບປະກັນຄວາມ ສະເໝີພາບ, ຍຸຕິທຳ, ພາວະວິໄສ ແລະ ສາມາດກວດສອບໄດ້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ອົງການຄຸ້ມຄອງການສຶກສາແຕ່ລະຂັ້ນ ທີ່ມີຈຸດປະສົງໃນການໂຮມ ໂຮງຮຽນສາມັນ ຂອງຂະແໜງການສຶກສາທິການ ແລະ ກິລາ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ການໂຮມໂຮງຮຽນ ປະຖົມ ແລະ ມັດທະຍົມ

**ມາດຕາ 5 ການໂຮມ ໂຮງຮຽນປະຖົມ**

ໂຮງຮຽນປະຖົມສາມາດໂຮມເຂົ້າກັນ ໄດ້ດັ່ງນີ້:

1. ໂຮງຮຽນມູນລະປະຖົມ ແລະ ໂຮງຮຽນມູນລະປະຖົມ ເຂົ້າກັນເປັນ ໂຮງຮຽນດຽວກັນ;
2. ໂຮງຮຽນມູນລະປະຖົມ ແລະ ໂຮງຮຽນປະຖົມສົມບູນ ເຂົ້າກັນເປັນ ໂຮງຮຽນປະຖົມສົມບູນ;
3. ໂຮງຮຽນປະຖົມສົມບູນ ແລະ ໂຮງຮຽນປະຖົມສົມບູນ ເຂົ້າກັນເປັນໂຮງຮຽນດຽວກັນ.

ກໍລະນີ ໂຮງຮຽນປະຖົມສົມບູນ ທີ່ມີຈຳນວນນັກຮຽນໜ້ອຍ ໃນເຂດຫ່າງໄກສອກຫຼີກ ແລະ ຫຍຸ້ງຍາກໃນການເດີນທາງ ສາມາດໂຮມນັກຮຽນ ຂັ້ນ ປ 4 ແລະ ປ 5 ເຂົ້າກັບໂຮງຮຽນປະຖົມທີ່ຢູ່ເຂດໃກ້ຄຽງ. ສຳລັບຂັ້ນ ປ1, ປ2 ແລະ ປ3 ໃຫ້ຮຽນຢູ່ໂຮງຮຽນ ແຫ່ງເກົ່າ.

**ມາດຕາ 6 ການໂຮມໂຮງຮຽນມັດທະຍົມ**

ໂຮງຮຽນມັດທະຍົມສາມາດໂຮມເຂົ້າກັນ ໄດ້ດັ່ງນີ້:

1. ໂຮງຮຽນມັດທະຍົມຕອນຕົ້ນ ແລະ ໂຮງຮຽນມັດທະຍົມຕອນຕົ້ນ ເຂົ້າກັນເປັນ ໂຮງຮຽນດຽວກັນ;
2. ໂຮງຮຽນມັດທະຍົມຕອນຕົ້ນ ແລະ ໂຮງຮຽນມັດທະຍົມຕອນປາຍ ເຂົ້າກັນເປັນ ໂຮງຮຽນມັດທະຍົມສົມບູນ;
3. ໂຮງຮຽນມັດທະຍົມຕອນຕົ້ນ ແລະ ໂຮງຮຽນມັດທະຍົມສົມບູນ ເຂົ້າກັນເປັນ ໂຮງຮຽນມັດທະຍົມສົມບູນ;
4. ໂຮງຮຽນມັດທະຍົມຕອນປາຍ ແລະ ໂຮງຮຽນມັດທະຍົມຕອນປາຍ ເຂົ້າກັນເປັນ ໂຮງຮຽນດຽວກັນ;
5. ໂຮງຮຽນມັດທະຍົມຕອນປາຍ ແລະ ໂຮງຮຽນມັດທະຍົມສົມບູນ ເຂົ້າກັນເປັນ ໂຮງຮຽນມັດທະຍົມສົມບູນ;
6. ໂຮງຮຽນມັດທະຍົມສົມບູນ ແລະ ໂຮງຮຽນມັດທະຍົມສົມບູນ ເຂົ້າກັນເປັນໂຮງຮຽນ ດຽວກັນ.

ກໍລະນີ ໂຮງຮຽນມັດທະຍົມ ທີ່ມີຈຳນວນນັກຮຽນ ໃນແຕ່ລະຂັ້ນ ໜ້ອຍກວ່າ 15 ຄົນ ລົງມາ ແມ່ນໃຫ້ໂອນນັກຮຽນດັ່ງກ່າວ ໄປໂຮງຮຽນມັດທະຍົມ ທີ່ຢູ່ເຂດໃກ້ຄຽງ.

## ໝວດທີ 3
## ເງື່ອນໄຂ ແລະ ຂັ້ນຕອນ ການໂຮມໂຮງຮຽນ

**ມາດຕາ 7 ເງື່ອນໄຂ ການໂຮມໂຮງຮຽນ**

**1. ການໂຮມໂຮງຮຽນປະຖົມ ມີເງື່ອນໄຂ ດັ່ງນີ້:**

1) ເປັນໂຮງຮຽນທີ່ມີທີ່ຕັ້ງໃກ້ຄຽງກັນ ໄລຍະທາງ ລະຫວ່າງ ໂຮງຮຽນ ຫາ ໂຮງຮຽນ ໃນເຂດຕົວເມືອງ ບໍ່ໃຫ້ເກີນ 3 ກິໂລແມັດ, ໃນເຂດຊານເມືອງ ບໍ່ໃຫ້ເກີນ 2 ກິໂລແມັດ ແລະ ເຂດພູດອຍ-ຫ່າງໄກສອກຫຼີກ ບໍ່ໃຫ້ເກີນ 1 ກິໂລແມັດ ຫຼື ຕາມເງື່ອນໄຂ ແລະ ຄວາມເໝາະສົມ ຂອງແຕ່ລະທ້ອງຖິ່ນ;

2) ໃນເຂດບໍລິການ ສໍາລັບ ເຂດຕົວເມືອງ ທີ່ມີຈໍານວນນັກຮຽນ ເຂົ້າຮຽນ ໜ້ອຍກວ່າ 50 ຄົນ; ເຂດຊານເມືອງ ທີ່ມີຈໍານວນນັກຮຽນ ເຂົ້າຮຽນ ໜ້ອຍກວ່າ 30 ຄົນ ແລະ ເຂດພູດອຍ-ຫ່າງໄກສອກຫຼີກທີ່ມີຈໍານວນນັກຮຽນ ເຂົ້າຮຽນ ໜ້ອຍກວ່າ 15 ຄົນ ຫຼື ຕາມເງື່ອນໄຂ ແລະ ຄວາມເໝາະສົມ ຂອງແຕ່ລະທ້ອງຖິ່ນ;

3) ມີການໂຮມບ້ານນ້ອຍ ເປັນ ບ້ານໃຫຍ່;

4) ດ້ານໂຄງລ່າງພື້ນຖານ ບໍ່ເອື້ອອໍານວຍຄວາມສະດວກ;

5) ຄູສອນ ບໍ່ພຽງພໍ ຫຼື ບໍ່ມີ ຄູສອນ.

**2. ການໂຮມໂຮງຮຽນມັດທະຍົມ ມີເງື່ອນໄຂ ດັ່ງນີ້:**

1) ເປັນໂຮງຮຽນທີ່ມີທີ່ຕັ້ງໃກ້ຄຽງກັນ ໄລຍະທາງ ລະຫວ່າງ ໂຮງຮຽນ ຫາ ໂຮງຮຽນ ໃນເຂດຕົວເມືອງ ບໍ່ໃຫ້ເກີນ 7 ກິໂລແມັດ, ໃນເຂດຊານເມືອງ ບໍ່ໃຫ້ເກີນ 5 ກິໂລແມັດ ແລະ ເຂດພູດອຍ-ຫ່າງໄກສອກຫຼີກ ບໍ່ໃຫ້ເກີນ 3 ກິໂລແມັດ ຫຼື ຕາມເງື່ອນໄຂ ແລະ ຄວາມເໝາະສົມ ຂອງແຕ່ລະທ້ອງຖິ່ນ;

2) ຈໍານວນ ນັກຮຽນ ເຂົ້າຮຽນ ໃນເຂດບໍລິການ ມີຈໍານວນໜ້ອຍ ຫຼື ຫຼຸດລົງ;

3) ດ້ານໂຄງລ່າງພື້ນຖານ ບໍ່ເອື້ອອໍານວຍຄວາມສະດວກ.

4) ຄູສອນ ບໍ່ພຽງພໍ ຫຼື ບໍ່ມີ ຄູສອນ.

**ມາດຕາ 8 ຂັ້ນຕອນ ການໂຮມໂຮງຮຽນສາມັນ**

ການໂຮມໂຮງຮຽນສາມັນ ມີຂັ້ນຕອນ ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບ ຄົ້ນຄວ້າ ແລະ ພິຈາລະນາ ການໂຮມໂຮງຮຽນສາມັນ ໃນແຕ່ລະຂັ້ນ;

2. ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເກັບກໍາ ແລະ ສັງລວມ ຂໍ້ມູນສະຖິຕິຂອງໂຮງຮຽນສາມັນ ພາຍໃຕ້ການຄຸ້ມຄອງຂອງຕົນ;

3. ຄະນະຮັບຜິດຊອບຂັ້ນເມືອງ ຄົ້ນຄວ້າ ແລະ ພິຈາລະນາ ການໂຮມໂຮງຮຽນປະຖົມ ແລະ ມັດທະຍົມຕອນຕົ້ນ ພາຍໃນ ເມືອງ, ນະຄອນ ແລະ ນໍາສະເໜີ ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;

4. ຄະນະຮັບຜິດຊອບຂັ້ນແຂວງ ຄົ້ນຄວ້າ ແລະ ພິຈາລະນາ ການໂຮມ ໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ ພາຍໃນແຂວງ, ນະຄອນຫຼວງ ແລະ ນໍາສະເໜີ ກະຊວງ ສຶກສາທິການ ແລະ ກິລາ.

**ມາດຕາ 9 ການອະນຸມັດ**

ການອະນຸມັດການໂຮມໂຮງຮຽນ ມີດັ່ງນີ້:

1. ການໂຮມໂຮງຮຽນປະຖົມ ແລະ ມັດທະຍົມຕອນຕົ້ນ ແມ່ນ ເຈົ້າເມືອງ, ເຈົ້ານະຄອນ ເປັນຜູ້ອະນຸມັດ ໂດຍຜ່ານການເຫັນດີ ຈາກພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;

2. ການໂຮມໂຮງຮຽນມັດທະຍົມຕອນປາຍ ແລະ ໂຮງຮຽນມັດທະຍົມສົມບູນ ແມ່ນ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ອະນຸມັດ ໂດຍຜ່ານການເຫັນດີ ຈາກກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 10 ການປະກອບເອກສານ**

ການໂຮມໂຮງຮຽນ ປະກອບເອກສານ ດັ່ງນີ້:

1. ບົດວິພາກການໂຮມໂຮງຮຽນ;
2. ບົດລາຍງານ ກ່ຽວກັບການໂຮມໂຮງຮຽນ;
3. ບົດບັນທຶກກອງປະຊຸມຄົ້ນຄວ້າ;
4. ເອກະສານຢັ້ງຢືນ ອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ;
5. ເອກະສານອື່ນ ທີ່ກ່ຽວຂ້ອງ.

ສໍາລັບ (ຮ່າງ) ບົດວິພາກ ການໂຮມໂຮງຮຽນ ໄດ້ມີເອກະສານຊ້ອນທ້າຍ.

## ໝວດທີ 4
## ການຄຸ້ມຄອງ ແລະ ການນໍາໃຊ້ ສະຖານທີ່ໂຮງຮຽນ

**ມາດຕາ 11 ການຄຸ້ມຄອງສະຖານທີ່ ໂຮງຮຽນທີ່ມີການໂຮມ**

ການຄຸ້ມຄອງສະຖານທີ່ ໂຮງຮຽນທີ່ມີການໂຮມໄປໂຮງຮຽນອື່ນ ໃຫ້ປະຕິບັດ ດັ່ງນີ້:

1. ຫ້ອງການສຶກສາທິການ ແລະ ກິລາເມືອງ ສົມທົບກັບ ອົງການປົກຄອງເມືອງ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ແຕ່ງຕັ້ງຄະນະຮັບຜິດຊອບ ໃນການຄຸ້ມຄອງສະຖານທີ່ຂອງໂຮງຮຽນ ທີ່ໄດ້ໂຮມເຂົ້າກັບໂຮງຮຽນອື່ນ;

2. ຫ້ອງການສຶກສາທິການ ແລະ ກິລາເມືອງ ສົມທົບກັບ ອົງການປົກຄອງເມືອງ ມີໜ້າທີ່ໃນການອອກລະບຽບການ ໃນການຄຸ້ມຄອງສະຖານທີ່ ໂຮງຮຽນໄດ້ໂຮມເຂົ້າກັບໂຮງຮຽນອື່ນ;

3. ຄະນະພັດທະນາການສຶກສາຂັ້ນບ້ານ ມີໜ້າທີ່ ໃນການປົກປັກຮັກສາ ແລະ ຈັດຕັ້ງເຜີຍແຜ່ລະບຽບການໃນການຄຸ້ມຄອງສະຖານທີ່ ໂຮງຮຽນທີ່ມີການໂຮມໄປໂຮງຮຽນອື່ນ.

**ມາດຕາ 12 ການນໍາໃຊ້ ສະຖານທີ່ ໂຮງຮຽນທີ່ມີການໂຮມ**

ການຄຸ້ມຄອງສະຖານທີ່ ໂຮງຮຽນທີ່ມີການໂຮມໄປໂຮງຮຽນອື່ນ ໃຫ້ປະຕິບັດ ດັ່ງນີ້:

1. ການນໍາໃຊ້ ສະຖານທີ່ ໂຮງຮຽນທີ່ມີການໂຮມໄປໂຮງຮຽນອື່ນ ແມ່ນນໍາໃຊ້ສະເພາະວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ເປັນຕົ້ນ ໂຮງລ້ຽງເດັກ ຫຼື ໂຮງຮຽນອະນຸບານ, ຫ້ອງປະຊຸມ ຫ້ອງສະໝຸດ, ສູນຝຶກອົບຮົມ, ສູນວິທະຍາສາດ, ສູນຝຶກກິລາ ແລະ ອື່ນໆ;

2. ການອະນຸມັດນຳໃຊ້ ສະຖານທີ່ ໂຮງຮຽນທີ່ມີການໂຮມໄປໂຮງຮຽນອື່ນ ສຳລັບຊັ້ນ ປະຖົມສຶກສາ ແລະ ມັດທະຍົມສຶກສາຕອນຕົ້ນ ແມ່ນ ເຈົ້າເມືອງ, ເຈົ້ານະຄອນ ເປັນ ຜູ້ອະນຸມັດ ໂດຍຜ່ານການເຫັນດີ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;

3. ການອະນຸມັດນຳໃຊ້ ສະຖານທີ່ ໂຮງຮຽນທີ່ມີການໂຮມໄປໂຮງຮຽນອື່ນ ສຳລັບຊັ້ນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ອະນຸມັດ ໂດຍຜ່ານການເຫັນດີຂອງ ກະຊວງສຶກສາທິການ ແລະ ກິລາ.

ສຳລັບ ພາກເອກະຊົນ ທີ່ມີຄວາມຕ້ອງການ ສຳປະທານ ສະຖານທີ່ໂຮງຮຽນປະຖົມ ແລະ ມັດທະຍົມ ທີ່ໄດ້ໂຮມໄປໂຮງຮຽນອື່ນ ຕ້ອງໄດ້ສະເໜີມາຍັງ ກະຊວງສຶກສາທິການ ແລະ ກິລາ.

## ໝວດທີ 5
## ຄະນະຮັບຜິດຊອບ ແຕ່ລະຂັ້ນ

### ມາດຕາ 13 ຄະນະຮັບຜິດຊອບແຕ່ລະຂັ້ນ

ຄະນະຮັບຜິດຊອບ ການໂຮມໂຮງຮຽນ ຂອງແຕ່ລະຂັ້ນ ມີດັ່ງນີ້:

**1. ຂັ້ນກະຊວງ**

1) ທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນປະທານ;
2) ທ່ານ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຮອງປະທານ;
3) ທ່ານ ຫົວໜ້າກົມສາມັນສຶກສາ ເປັນຮອງປະທານ;
4) ທ່ານ ຫົວໜ້າກົມປະກັນຄຸນນະພາບການສຶກສາ ເປັນຄະນະ;
5) ທ່ານ ຫົວໜ້າຫ້ອງການ ເປັນຄະນະ;
6) ທ່ານ ຫົວໜ້າກົມແຜນການ ເປັນຄະນະ;
7) ທ່ານ ຫົວໜ້າກົມການເງິນ ເປັນຄະນະ;
8) ທ່ານ ຫົວໜ້າກົມກວດກາ ເປັນຄະນະ;
9) ທ່ານ ຜູ້ອຳນວຍການສູນສະຖິຕິການສຶກສາ ແລະ ກິລາ ເປັນຄະນະ;
10) ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ;
11) ທ່ານ ຮອງຫົວໜ້າກົມສາມັນສຶກສາ ເປັນຄະນະ;
12) ທ່ານ ຫົວໜ້າພະແນກ ວິຊາການ ພາຍໃນກົມສາມັນສຶກສາ ເປັນຄະນະ;
13) ທ່ານ ຜູ້ຕາງໜ້າພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຄະນະ;
14) ທ່ານ ຫົວໜ້າພະແນກບໍລິຫານ ແລະ ກິງຈັກການຈັດຕັ້ງ ເປັນເລຂານຸການ

**2. ຂັ້ນແຂວງ**

1) ທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ (ຜູ້ຊີ້ນຳວຽກງານວັດທະນາທຳສັງຄົມ) ເປັນປະທານ;
2) ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເປັນຮອງປະທານ;
3) ທ່ານ ຫົວໜ້າພະແນກພາຍໃນແຂວງ, ນະຄອນຫຼວງ ເປັນຄະນະ;
4) ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເປັນຄະນະ;
5) ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ເປັນຄະນະ;

6) ທ່ານ ຫົວໜ້າຂະແໜງຈັດຕັ້ງ ແລະ ພະນັກງານ ເປັນຄະນະ;

7) ທ່ານ ຫົວໜ້າຂະແໜງສາມັນສຶກສາ ເປັນຄະນະ;

8) ທ່ານ ຫົວໜ້າຂະແໜງບໍລິຫານ ແລະ ການເງິນ ເປັນຄະນະ;

9) ທ່ານ ຫົວໜ້າຂະແໜງສະຖິຕິ, ແຜນການ ແລະ ຮ່ວມມືກັບຕ່າງປະເທດ ເປັນຄະນະ;

10) ທ່ານ ຫົວໜ້າຂະແໜງກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ ເປັນຄະນະ;

11) ທ່ານ ຜູ້ຕາງໜ້າພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຄະນະ;

12) ທ່ານ ຮອງຫົວໜ້າຂະແໜງຈັດຕັ້ງ ແລະ ພະນັກງານ ສກຂ, ສກນວ ເປັນກອງເລຂາ.

### 3. ຂັ້ນເມືອງ

1) ທ່ານ ຮອງເຈົ້າເມືອງ, ຮອງເຈົ້ານະຄອນ (ຜູ້ຊີ້ນໍາວຽກງານວັດທະນາທໍາສັງຄົມ) ເປັນປະທານ;

2) ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ ເປັນຮອງປະທານ;

3) ທ່ານ ຫົວໜ້າຫ້ອງການພາຍໃນເມືອງ, ນະຄອນ ເປັນຄະນະ;

4) ທ່ານ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ ເປັນຄະນະ;

5) ທ່ານ ຜູ້ອໍານວຍການໂຮງຮຽນ ທີ່ກ່ຽວຂ້ອງ ເປັນຄະນະ;

6) ທ່ານ ຫົວໜ້າໜ່ວຍງານຈັດຕັ້ງ ແລະ ພະນັກງານ ເປັນຄະນະ;

7) ທ່ານ ຫົວໜ້າໜ່ວຍກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ ເປັນຄະນະ;

8) ບັນດາທ່ານຫົວໜ້າໜ່ວຍງານວິຊາການທີ່ກ່ຽວຂ້ອງ ສກມ, ສກນຄ ເປັນຄະນະ;

9) ທ່ານ ປະທານຄະນະພັດທະນາການສຶກສາແຕ່ລະຂັ້ນ ເປັນຄະນະ;

10) ທ່ານ ນາຍບ້ານ/ປະທານສະມາຄົມພໍ່ແມ່ນັກຮຽນ ທີ່ໂຮງຮຽນຕັ້ງຢູ່ ເປັນຄະນະ;

11) ທ່ານ ຜູ້ຕາງໜ້າພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຄະນະ;

12) ທ່ານ ຮອງຫົວໜ້າໜ່ວຍງານຈັດຕັ້ງ ແລະ ພະນັກງານ ເປັນກອງເລຂາ.

## ມາດຕາ 14 ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບການໂຮມໂຮງຮຽນ

ຄະນະຮັບຜິດຊອບ ການໂຮມໂຮງຮຽນ ແຕ່ລະຂັ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

### 1. ຂັ້ນກະຊວງ

1) ຄົ້ນຄວ້າ ສ້າງ ແລະ ປັບປຸງ ນິຕິກໍາກ່ຽວກັບ ການໂຮມໂຮງຮຽນ ພ້ອມທັງ ຈັດຕັ້ງເຜີຍແຜ່ບັນດານິຕິກໍາທີ່ກ່ຽວຂ້ອງ;

2) ສັງລວມ ຂໍ້ມູນສະຖິຕິຈໍານວນ ຄູ, ນັກຮຽນ ແລະ ໂຮງຮຽນ ປະຖົມ ແລະ ມັດທະຍົມ ໃນຂອບເຂດທົ່ວປະເທດ;

3) ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານການໂຮມໂຮງຮຽນ;

4) ຄົ້ນຄວ້າ ແລະ ພິຈາລະນາ ການໂຮມໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ ຕາມການສະເໜີຂອງ ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;

5) ຕິດຕາມ, ກວດກາ ແລະ ປະເມີນ, ພ້ອມທັງສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເປັນປົກກະຕິ;

6) ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ.

**2. ຂັ້ນແຂວງ**

1) ຈັດຕັ້ງປະຕິບັດ ບັນດານິຕິກຳກ່ຽວກັບການໂຮມໂຮງຮຽນ ພ້ອມທັງ ຈັດຕັ້ງເຜີຍແຜ່ບັນດານິຕິກຳທີ່ກ່ຽວຂ້ອງ ໃຫ້ບັນດາຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ແລະ ພາກສ່ວນທີ່ຂຶ້ນກັບ;

2) ຄົ້ນຄວ້າເກັບກຳ ແລະ ສັງລວມ ຂໍ້ມູນສະຖິຕິໂຮງຮຽນປະຖົມ ແລະ ມັດທະຍົມ ພາຍໃນ ແຂວງ, ນະຄອນຫຼວງ;

3) ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານການໂຮມໂຮງຮຽນ;

4) ຄົ້ນຄວ້າ ແລະ ພິຈາລະນາ ການໂຮມໂຮງຮຽນປະຖົມສຶກສາ ແລະ ມັດທະຍົມຕອນຕົ້ນ ຕາມການສະເໜີຂອງ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ;

5) ຄົ້ນຄວ້າ ແລະ ພິຈາລະນາ ການໂຮມ ໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ ຕາມການສະເໜີຂອງ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ, ແລ້ວສະເໜີ ກະຊວງສຶກສາທິການ ແລະ ກິລາ;

6) ຕິດຕາມ, ກວດກາ ແລະ ປະເມີນ, ພ້ອມທັງ ສະຫຼຸບລາຍງານການຈັດຕັ້ງປະຕິບັດ ວຽກງານດັ່ງກ່າວເປັນປົກກະຕິ;

7) ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ.

**3. ຂັ້ນເມືອງ**

1) ຈັດຕັ້ງປະຕິບັດບັນດານິຕິກຳ ກ່ຽວກັບການໂຮມໂຮງຮຽນ ພ້ອມທັງຈັດຕັ້ງເຜີຍແຜ່ບັນດານິຕິກຳທີ່ກ່ຽວຂ້ອງ ໃຫ້ບັນດາໂຮງຮຽນ ແລະ ກຸ່ມໂຮງຮຽນ ພາຍໃນເມືອງ, ນະຄອນ;

2) ຄົ້ນຄວ້າເກັບກຳ ແລະ ສັງລວມ ຂໍ້ມູນສະຖິຕິໂຮງຮຽນ ປະຖົມ ແລະ ມັດທະຍົມ ພາຍໃນ ເມືອງ, ນະຄອນ;

3) ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານການໂຮມໂຮງຮຽນ;

4) ຄົ້ນຄວ້າ ແລະ ພິຈາລະນາ ການໂຮມໂຮງຮຽນ ປະຖົມ ແລະ ມັດທະຍົມຕອນຕົ້ນ ແລ້ວສະເໜີພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;

5) ຕິດຕາມ, ກວດກາ ແລະ ປະເມີນ, ພ້ອມທັງສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານດັ່ງກ່າວເປັນປົກກະຕິ;

6) ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 15 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມື ໃນການເຄື່ອນໄຫວວຽກງານ ຂອງຄະນະຮັບຜິດຊອບໂຮມໂຮງຮຽນ;
2. ໂຄສະນາໃສ່ຮ້າຍປ້າຍສີ ຊຶ່ງສ້າງຄວາມເສຍຫາຍ ໃຫ້ແກ່ວຽກງານການໂຮມໂຮງຮຽນ;
3. ທຳລາຍສິ່ງອຳນວຍຄວາມສະດວກ ແລະ ໂຄງລ່າງພື້ນຖານ ຂອງໂຮງຮຽນ;

4. ນຳໃຊ້ ທີ່ດິນ, ສະຖານທີ່ ແລະ ຫ້ອງຮຽນ ຂອງໂຮງຮຽນ ໃນການເຄື່ອນໄຫວວຽກງານທີ່ບໍ່ໄດ້ຮັບອະນຸຍາດ;

5. ມີພຶດຕິກຳອື່ນ ທີ່ຂັດກັບກົດໝາຍ ແລະ ລະບຽບການ.

**ມາດຕາ 16 ຂໍ້ຫ້າມ ສຳລັບຄູ, ຜູ້ບໍລິຫານໂຮງຮຽນ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ**

ຫ້າມ ຄູ, ຜູ້ບໍລິຫານໂຮງຮຽນ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ມີພຶດຕິກຳດັ່ງນີ້:

1. ສະໜອງຂໍ້ມູນສະຖິຕິ ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ໃຫ້ຄະນະຮັບຜິດຊອບໂຮມໂຮງຮຽນ;
2. ສ້າງຄວາມຫຍຸ້ງຍາກ, ກົດໜ່ວງຖ່ວງດຶງ ກ່ຽວກັບວຽກງານການໂຮມໂຮງຮຽນ;
3. ສ້າງກຸ່ມກ້ອນ, ພັກພວກ, ແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນ ພາຍໃນໂຮງຮຽນ;
4. ນຳໃຊ້ ແລະ ເຄື່ອນຍ້າຍ ຊັບສິນຂອງໂຮງຮຽນ ໄປເປັນຂອງຕົນເອງ;
5. ໃຫ້ບຸກຄົນອື່ນ ນຳໃຊ້, ໃຫ້ເຊົ່າ ຫຼື ໂອນຊັບສິນ ແລະ ທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດ;
6. ມີພຶດຕິກຳອື່ນ ທີ່ຂັດກັບກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ມອບໃຫ້ ຫ້ອງການ, ກົມ, ອົງການທຽບເທົ່າກົມ, ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ແລະ ສະຖານການສຶກສາ ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການໂຮມ ໂຮງຮຽນສາມັນ ສະບັບເລກທີ 585/ສສກ, ລົງວັນທີ 29 ມັງກອນ 2025, ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆ ຊຶ່ງປະກາດໃຊ້ໃນເມື່ອກ່ອນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

**ລັດຖະມົນຕີ**

ກະຊວງສຶກສາທິການ ແລະ ກິລາ ລັດຖະມົນຕີ

**ຮສ. ປອ. ພຸດ ສິມມາລາວົງ**

**ບ່ອນສົ່ງ:**

| | | |
|---|---|---|
| 1. | ຫ້ອງການກະຊວງ | 1 ສະບັບ; |
| 2. | ບັນດາກົມ, ສະຖາບັນ ແລະ ສູນ ພາກສ່ວນລະ | 1 ສະບັບ; |
| 3. | ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພາກສ່ວນລະ | 1 ສະບັບ; |
| 4. | ພາກສ່ວນທີ່ກ່ຽວຂ້ອງ ພາກສ່ວນລະ | 1 ສະບັບ; |
| 5. | ເກັບມ້ຽນ | 3 ສະບັບ. |